ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ

ເລກທີ 152 /ວກປສຂ
ນະຄອນໄກສອນພົມວິຫານ, ວັນທີ 06 ເມສາ 2026

# ໜັງສືແຈ້ງເຊີນປະມູນ

1. ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນ ໂຄງການ ປັບປຸງ ສ້ອມແປງຮົ້ວອ້ອມ ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ ກຳນົດໄລຍະເວລາ 24 ເດືອນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ມີໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025 ຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ; ສອບຖາມຂໍ້ມູນ ແລະ ລົງກວດກາສະໜາມຕົວຈິງໄດ້ໂດຍພົວພັນຫາ ທ່ານ ສີສົມຊົບ ສຸລິຍະວົງ ຫົວໜ້າພະແນກບໍລິຫານ ແລະ ແຜນການ, ເບີໂທລະສັບ 020 22603024 ແລະ ຊື້ເອກະສານ-ປະມູນ ໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການເປັນຕົ້ນໄປ.
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນ ຕ້ອງຍື່ນໜັງສືສະເໜີຫາ ພະແນກບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ ຕັ້ງຢູ່ບ້ານນາແກ, ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ, ທ່ານ ສີສົມຊົບ ສຸລິຍະວົງ ເບີໂທລະສັບ 020 22603024 (ໃນໂມງລັດຖະການ), ເລີ່ມແຕ່ 06 ເມສາ ຫາ 11 ພຶດສະພາ 2026 ນີ້, ໃນ ລາຄາ 8,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.
6. ຊອງປະມູນຕ້ອງສົ່ງ, ໃນເວລາ ຫຼື ກ່ອນເວລາ 14:00 ໂມງ, ວັນທີ 11 ພຶດສະພາ 2026 ທີ່ ຫ້ອງປະຊຸມ ວິທະ ຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ, ວັນທີ 11 ພຶດສະພາ 2026 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.



สแกนด้วย CamScanner

7. ທຸກໆ ຊອງປະມູນ ຕ້ອງໄດ້ມີໜັງສືຄ້ຳປະກັນການປະມູນອອກໂດຍທະນາຄານ,ດ້ວຍເງິນສົດ (ຖ້າເປັນແຊັກເງິນສົດຕ້ອງວິຊາຈາກທະນາຄານ) ຊຶ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ.

8. ທີ່ຢູ່: ວິທະຍາໄລກະສິກຳ ແລະ ປ່າໄມ້ ສະຫວັນນະເຂດ ຕັ້ງຢູ່ບ້ານນາແກ, ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ.

**ອຳນວຍການວິທະຍາໄລກະສິກຳ ແລະ ປ່າໄມ້**
**ສະຫວັນນະເຂດ**

ຈຳປາທອງ ທຳມະວົງ



สแกนด้วย CamScanner